ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະຫະພັນນັກຮົບເກົ່າແຂວງ
ຄະນະຮັບຜິດຊອບ

ເລກທີ..153../ສນຂ.
ບໍ່ແກ້ວ, ວັນທີ .15../..02..../2023.

# ບົດລາຍງານຍໍ້

## *ການເກັບກຳສັງລວມສະພາບແນວຄິດ - ທາງສຽງສັງຄົມ*

## ຂອງສະຫະພັນນັກຮົບເກົ່າແຂວງ ປະຈຳເດືອນ 02 ປີ 2023.

ຮຽນ: ທ່ານ ຫົວໜ້າ ຄະນະໂຄສະນາອົບຮົມແຂວງ ທີ່ເຄົາລົບ ແລະ ນັບຖືຢ່າງສູງ.

ເລື່ອງ: ຂໍລາຍງານການສັງລວມເກັບກຳສະພາບແນວຄິດ - ທາງສຽງສັງຄົມ.

- ອີງຕາມ ແຈ້ງການຂອງຄະນະໂຄສະນາອົບຮົມແຂວງ ສະບັບເລກທີ 041/ຄອຂ, ລົງວັນທີ 13 ກຸມພາ 2023 ວ່າດ້ວຍລາຍງານສະພາບແນວຄິດສັງຄົມ ປະຈຳເດືອນ 02 / 2023.
- ອີງຕາມ ຂໍ້ກຳນົດ ສະບັບເລກທີ 184/ຄປຂ, ລົງວັນທ 28 ກຸມພາ 2022 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະຮັບຜິດຊອບ ຕິດຕາມ, ເກັບກຳສະພາບແນວຄິດ-ທາງສຽງສັງຄົມຂັ້ນແຂວງ.

ຄະນະຮັບຮັບຜິດຊອບ ຕິດຕາມ, ເກັບກາສະພາບແນວຄິດ-ທາງສຽງສັງຄົມສະຫະພັນນັກຮົບເກົ່າແຂວງ ຂໍຖືເປັນກຽດຢ່າງສູງລາຍງານ ສະພາບການສັງລວມ-ເກັບກຳທາງສຽງສັງຄົມຂອງ ສະຫະພັນນັກຮົບເກົ່າແຂວງ ປະຈຳເດືອນ 02 /2023 ຕາມທາງສຽງຂອງຊາວແຂວງບໍ່ແກ້ວຈົ່ມວ່າ ດັ່ງນີ້:

1. ການທຳມາຫາກິນຂອງພໍ່ແມ່ປະຊາຊົນຍັງພົບຄວາມຫຍຸ້ງຍາກຫຼາຍເພາະວ່າຄ່າຄອງຊີບມັນຕໍ່າ;
2. ຍັງມີປະຊາຊົນຈຳນວນຫຼາຍທີ່ຍັງບໍ່ມີອາຊີບທີ່ໝັ້ນຄົງໃນປະຈຸບັນ;
3. ບັນດາລູກຫຼານຂອງພໍ່ແມ່ປະຊາຊົນບັນດາເຜົ່າທີ່ຮຽນຈົບວິຊາຊີບມາຍັງບໍ່ມີບ່ອນເຮັດວຽກທີ່ໝັ້ນຄົງສ່ວນຫຼາຍແມ່ນເປັນອາສາສະໝັກ;
4. ພໍ່ແມ່ປະຊາຊົນເຂດຫ່າງໄກຊອກຫຼີກເມື່ອເຫັນວ່າລູກຫຼານຕົວເອງໃຫຍ່ມາພໍສ້າງຄອບສ້າງຄົວໄດ້ແລ້ວກໍ່ໃຫ້ອອກໂຮງຮຽນເພາະພໍ່ແມ່ປະຊາຊົນເຂົ້າໃຈວ່າຮຽນໄປກໍ່ຊອກວຽກຍາກ;
5. ຄ່າເງິນກີບອ່ອນຕົວ, ຄ່າເງິນຕາຕ່າງປະເທດແຂງຕົວ ເຮັດໃຫ້ການດຳລົງຊີວິດພົບຄວາມຫຍຸ້ງຍາກຫຼາຍ;

➢ **ພາກສະເໜີ.**

1. ຢາກໃຫ້ພາກສ່ວນທີ່ກ່ຽວຂ້ອງຄວບຄຸມລາຄາສິນຄ້າຢູ່ຕາມທ້ອງຕະຫຼາດໃຫ້ມີລາຄາທີ່ເໝາະສົມ;
2. ອັດຕາການແລກປ່ຽນຂອງທະນາຄານເຫັນວ່າເງິນກີບລາວຍັງອ່ອນຄ່າຢູ່;
3. ການບໍລິການຂອງທະນາຄານຍັງບໍ່ທັນກວ້າງຂວາງເທົ່າທີ່ຄວນເປັນຕົ້ນສັງເກດເຫັນບາງເມືອງຍັງບໍ່ມີຕູ້ເອທີເອັມຂອງແຕ່ລະທະນາຄານເທື່ອ;
4. ສະເໜີໃຫ້ຂັ້ນເທິງແກ້ໄຂການເສຍພາສີລົດເຖື່ອນທຸກປະເພດຂອງປະຊາຊົນ ແລະ ພະນັກງານຍັງມີຫຼາຍຖ້າບໍ່ແກ້ໄຂກໍ່ຖືວ່າຂາດງົບປະມານເຂົ້າລັດ.

Scanned with CamScanner

5. ສະເໜີໃຫ້ທະນາຄານລົງກວດກາຄືນການແລກປ່ຽນເງິນຕາຢູ່ຮ້ານຂາຍຄຳຍັງມີຫຼາຍ ແລະສູງກວ່າເລດທະນາຄານກຳນົດ.

ດັ່ງນັ້ນ, ຈຶ່ງລາຍງານມາຍັງທ່ານເພື່ອຊາບ ແລະ ໃຫ້ທິດຊີ້ນຳດ້ວຍ.

**ຄະນະຮັບຜິດຊອບ**

**ເກັບກຳທາງສງງສັງຄົມ ສະຫະພັນນັກຮົບເກົ່າແຂວງ**

ພິມມາ ໄຊຍະແສງ

Scanned with CamScanner